# ແກ້ວໃສ່ຂໍ້ຄວາມແຫ່ງຄວາມຝັນຊ່ວຍສົ່ງເສີມການແລກປ່ຽນດ້ານວັດທະນະທໍາ

✤ ກິດຈະກໍາ " ກວດແກ້ວໃສ່ຂໍ້ຄວາມແຫ່ງຄວາມຝັນ " ແມ່ນເລີ່ມຕົ້ນມາຈາກຮູບເງົາເລື່ອງ"ນິທານກະແສຕົ້ນດໍາ(Kuroshio) ຂອງຂວັນມາຈາກທະເລ" ເຊິ່ງໄດ້ດໍາເນີນຢູ່ປະເທດຍີ່ປຸ່ນໄດ້ 14 ປີມາແລ້ວ ໂດຍມີຈຸດປະສົງເພື່ອສົ່ງເສີມຄວາມຫວັງ ແລະ ຄວາມຝັນຂອງເດັກນ້ອຍ ສົ່ງເສີມການພົບປະແລກປ່ຽນວັດທະນະທໍາ ພາສາການດໍາລົງຊີວິດ ແຫຼ່ງທ່ອງທ່ຽວແລະ ປະສົບການຕ່າງໆເຊິ່ງກັນແລະ ກັນ ປີ 2008 ທ່ານ ເທັດຊຸໂອະ ໂຢຊິດະ ຫົວໜ້າສູນຝຶກອົບຮົມເທັດຈັງເນັດ(ນ.ສ ວຽງຈັນ) ໄດ້ລະດົມຈົດໝາຍຂອງເດັກນ້ອຍລາວຈໍານວນ 46 ສະບັບເຂົ້າຮ່ວມກິດຈະກໍາດັ່ງກ່າວເປັນຄັ້ງທໍາອິດໂດຍໄດ້ນໍາໃສ່ໃນແກ້ວ 10 ໜ່ວຍໄປປ່ອຍລົງທະເລຢູ່ເມືອງ Shibushi ປະເທດຍີ່ປຸ່ນ ຈົດໝາຍເຫຼົ່ານັ້ນ ໄດ້ຂຽນກ່ຽວກັບຄວາມຝັນ ຄວາມປາຖະໜາຂອງຕົນໃສ່ໃນແກ້ວດັ່ງກ່າວ ແລະ ກວດແກ້ວເຫຼົ່ານັ້ນ ໄດ້ໄຫຼກະຈາຍກັນໄປ ເຊິ່ງໃນນັ້ນມີແກ້ວໜຶ່ງໜ່ວຍ ທີ່ເດັກນ້ອຍຍີ່ປຸ່ນຢູ່ເມືອງ Toyoshi ປະເທດຍີ່ປຸ່ນ ເກັບໄດ້ແລ້ວມາອ່ານໂດຍຜ່ານການແປຈາກພາສາລາວເປັນພາສາຍີ່ປຸ່ນ ຈຶ່ງຮູ້ວ່າຈົດໝາຍເຫຼົ່ານີ້ມາຈາກປະເທດລາວ ຈາກນັ້ນເຂົາເຈົ້າກໍໄດ້ຂຽນຈົດໝາຍຄວາມຝັນ ແລະ ຄວາມປາຖະໜາຕອບກັບຄືນພ້ອມທັງໄດ້ມີການຕິດຕໍ່ພົວພັນກັນເປັນຢ່າງດີ.

ສໍາລັບປີ 2009 ແມ່ນປີແຫ່ງການແລກປ່ຽນລະຫວ່າງປະເທດຍີ່ປຸ່ນ ແລະ ບັນດາປະເທດລຸ່ມແມ່ນໍ້າຂອງ ສະນັ້ນ ເພື່ອເປັນການສົ່ງຄວາມປາຖະໜາດີໄປຍັງບັນດາປະເທດໃນໂລກ ໂດຍຖືເອົາ ສປປ ລາວ ເປັນຈຸດສໍາຄັນໃນການແລກປ່ຽນມິດຕະພາບໂດຍຜ່ານແມ່ນໍ້າຂອງ ກິດຈະກໍາ"ກວດແກ້ວໃສ່ຂໍ້ຄວາມແຫ່ງຄວາມຝັນ" ຈຶ່ງຈະໄດ້ມາຈັດຂຶ້ນເປັນຄັ້ງທໍາອິດຢູ່ ສປປ ລາວ ໂດຍປັດຈຸບັນແມ່ນກໍາລັງຢູ່ຂັ້ນຕອນປະສານງານ ແລະ ລໍຖ້າການອະນຸຍາດຈາກກະຊວງສຶກສາທິການ ເມື່ອໄດ້ຮັບອະນຸຍາດກໍຈະຈັດຂຶ້ນທັນທີ ໂດຍການປ່ອຍກວດແກ້ວ ຈະຈັດຢູ່ນະຄອນຫຼວງວຽງຈັນ ຫຼວງພະບາງ ແລະ ແຂວງຈໍາປາສັກ ເຊິ່ງຈະໄດ້ສະເໜີໄປຕາມໂຮງຮຽນຕ່າງໆໃນທົ່ວປະເທດເພື່ອຂຽນຈົດໝາຍຄວາມຝັນ ຄວາມປາຖະໜາຂອງຕົນເຂົ້າຮ່ວມ.